# ທີມງານການດູແລລະຫວ່າງຫຼາຍຝ່າຍ ໃນ Family Care Partnership (ໂຄງການຫຸ້ນສ່ວນດູແລຄອບຄົວ)

## ໃຜບ້າງແດ່ຢູ່ໃນທີມງານການດູແລລະຫວ່າງຫຼາຍຝ່າຍຂອງຂ້າພະເຈົ້າ?

ຖ້າທ່ານມີສ່ວນຮ່ວມໃນ Family Care Partnership (ໂຄງການຫຸ້ນສ່ວນດູແລຄອບຄົວ), ຫຼືທີ່ຮູ້ຈັກໃນຊື່ວ່າໂຄງການ Partnership ທີມງານກໍ່ຈະມາຮ່ວມກັນເພື່ອຊ່ວຍທ່ານລະບຸການຊ່ວຍເຫຼືອທີ່ທ່ານຕ້ອງການແລະເຮັດວຽກຮ່ວມກັບທ່ານເພື່ອຈັດແຈງການບໍລິການດູແລໄລຍະຍາວແລະບໍລິການດ້ານການແພດຂອງທ່ານ. ທ່ານເປັນຜູ້ທີ່ກໍາລັງເຂົ້າຮ່ວມໃນທີມທີ່ຢ່າງໜ້ອຍຕ້ອງມີ, ທ່ານໝໍ, ນາງພະຍາບານ, ຜູ້ຈັດການດ້ານການດູແລແລະນາງພະຍາບານວິຊາຊີບ. ທ່ານສາມາດເລືອກທີ່ຈະລວມສະມາຊິກໃນຄອບຄົວຫຼືຄົນທີ່ທ່ານຮັກເຂົ້າໃນທີມຂອງທ່ານໄດ້. ບາງຄັ້ງຜູ້ຄົນກໍ່ເລືອກຜູ້ຊ່ຽວຊານດ້ານອື່ນໆ, ເຊັ່ນວ່າພະນັກງານດູແລສ່ວນບຸກຄົນ, ໃຫ້ມາເຂົ້າຮ່ວມເປັນສະມາຊິກທີມຄືກັນ. ໃນ Partnership, ທີມງານນີ້ຖືກເອີ້ນວ່າ "ທີມງານການດູແລລະຫວ່າງຫຼາຍຝ່າຍ" ("interdisciplinary team").

## ທີມງານການດູແລລະຫວ່າງຫຼາຍຝ່າຍຂອງທ່ານເຮັດຫຍັງ?

ທີມງານການດູແລລະຫວ່າງຫຼາຍຝ່າຍນີ້ວາງແຜນ, ສົ່ງມອບ, ແລະເບິ່ງແຍງການດູແລຂອງທ່ານໃຫ້ສະຖານທີ່ຕ່າງໆທັງໝົດ ຈາກເຮືອນຂອງທ່ານໄປຮອດໂຮງໝໍ. ທີມງານເຮັດປະເມີນຄວາມຕ້ອງການຂອງທ່ານຢ່າງສົມບູນແລະພັດທະນາແຜນການບໍລິການເພື່ອຕອບສະໜອງຄວາມຕ້ອງການເຫຼົ່ານັ້ນ. ການບໍລິການທີ່ໄດ້ລະບຸໄວ້ໃນແຜນການຂອງທ່ານແມ່ນເຮັດໄວ້ສະເພາະທ່ານແລະເນັ້ນໜັກໃສ່ວິທີທີ່ມີປະສິດທິພາບແລະປະຫຍັດຄ່າໃຊ້ຈ່າຍທີ່ສຸດເພື່ອຕອບສະໜອງຄວາມຕ້ອງການແລະເປົ້າໝາຍສ່ວນບຸກຄົນຂອງທ່ານ. ຜູ້ຈັດການດ້ານການດູແລ, ນາງພະຍາບານວິຊາຊີບ, ແລະນາງພະຍາບານ ຈະອະນຸຍາດໃຫ້ຈ່າຍຄ່າບໍລິການຂອງທ່ານ, ແລະກວດກາຄຸນນະພາບຂອງບໍລິການທີ່ທ່ານໄດ້ຮັບ.

ນີ້ແມ່ນຕົວຢ່າງຂອງທີມງານການດູແລລະຫວ່າງຫຼາຍຝ່າຍໃນໂຄງການ Partnership. ບຸກຄົນທີ່ຢູ່ໃນສູນກາງແມ່ນທ່ານ. ບົດບາດຂອງທີມງານການດູແລລະຫວ່າງຫຼາຍຝ່າຍນີ້ແມ່ນເພື່ອຊ່ວຍເຫຼືອທ່ານໃຫ້ທ່ານບັນລຸຜົນສໍາເລັດຂອງທ່ານ.

